ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 15 ຫາ 19 ເມສາ 2024



ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະລົງຊຸກຍູ້ການຜະລິດ ລະດູແລ້ງທີ່ແຂວງ ອັດຕະປື

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະລົງຊຸກຍູ້ການຜະລິດລະດູແລ້ງ ທີ່ແຂວງ ອັດຕະປື

ໃນວັນທີ 3 ເມສາ 2024 ທີ່ຜ່ານມາ ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວ ແລະ ຊຸກຍູ້ການຜະລິດຢູ່ທີ່ແຂວງ ອັດຕະປື ໂດຍການຕ້ອນຮັບຂອງ ທ່ານ ພັນໂທ ວັນທອງ ກອງມະນີ ເຈົ້າແຂວງ ແຂວງ ອັດຕະປື ໂອກາດນີ້ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກໍ່ໄດ້ລາຍງານຈຸດປະສົງຂອງການລົງມາເຄື່ອນໄຫວເພື່ອຊຸກຍູ້ຕິດຕາມການຜະລິດລະແລ້ງ, ໂດຍສະເພາະການຜະລິດເພື່ອຄ້ຳປະກັນສະບຽງອາຫານທີ່ມີໂພຊະນາການ, ການຜະລິດກະສິກຳເປັນສິນຄ້າຕິດພັນກັບກະສິກຳສະອາດ, ສີຂຽວ, ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ການສົ່ງເສີມການລ້ຽງສັດ ແລະ ການປະມົງໃຫ້ກຸ້ມກິນໂດຍພື້ນຖານ, ຕິດຕາມກວດກາຕ້ານ ແລະ ສະກັດກັ້ນການຫຼັກລອບຕັດໄມ້, ການບຸກລຸກປ່າໄມ້ເພື່ອເຮັດການຜະລິດໂດຍສະເພາະການຖາງປ່າເຮັດໄຮ່, ເຮັດສວນສາລີ, ສ່ວນມັນຕົ້ນ ແລະ ອື່ນໆ.

ເວລາຕໍ່ມາຄະນະດັ່ງກ່າວກໍ່ໄດ້ເຂົ້າຮ່ວມຮັບຟັງການລາຍງານຈາກ ທ່ານ ເພັດທະນົງສັກ ຄຳພູມມີ ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ອັດຕະປືເຊິ່ງທ່ານໄດ້ໃຫ້ຮູ້ວ່າ: ການຜະລິດກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ທົ່ວແຂວງ ໂດຍສະເພາະການຜະລິດເຂົ້ານາປີທັງໝົດ 28 ພັນກວ່າເຮັກຕາ, ຜົນຜະລິດ 92 ພັນກວ່າໂຕນ ສະມັດຕະພາບ 3,3 ໂຕນ/ຮຕ, ນາແຊງ 6 ຮ້ອຍກວ່າເຮັກຕາ ຜົນຜະລິດ 2 ພັນກວ່າໂຕນ, ສະມັດຕະພາບສະເລຍ 3.7 ກວ່າໂຕນ. ເຂົ້າໄຮ່ 2 ພັນກວ່າເຮັກຕາ, ຜົນຜະລິດ 5 ພັນກວ່າໂຕນ, ການຜະລິດພືດສະບຽງອາຫານສາມາດປະຕິບັດໄດ້ 8 ຮ້ອຍກວ່າເຮັກຕາ ຜົນຜະລິດໄດ້ 8 ພັນກວ່າໂຕນ, ວຽກງານລ້ຽງສັດ ແລະ ການປະມົງ ມີສັດລ້ຽງທັງໝົດ 5 ແສນກວ່າ



ໂຕ ໃນນີ້ມີຄວາຍ 5 ພັນກວ່າໂຕ, ງົວ 50 ພັນກວ່າໂຕ, ໝູ 27 ພັນກວ່າໂຕ, ແບ້ 15 ພັນກວ່າໂຕ, ສັດປີກ 4 ແສນກວ່າໂຕ, ແຜນງານຜະລິດກະສິກຳເປັນສິນຄ້າທົ່ວແຂວງ ປະຕິບັດໄດ້ 66 ພັນກວ່າເຮັກຕາ, ຜົນຜະລິດ 1 ລ້ານກວ່າໂຕນ, ໂດຍມີບໍລິສັດລົງທຶນຮ່ວມກັບປະຊາຊົນມີທັງໝົດ 17 ພັນຄອບຄົວ ມີເນື້ອທີ່ 33 ພັນກວ່າເຮັກຕາ ຜົນຜະລິດ 787 ພັນກວ່າໂຕນ, ພ້ອມນີ້ຄະນະດັ່ງກ່າວກໍ່ໄດ້ໄປຢ້ຽມຢາມບໍລິສັດ ທາໂກ ທີ່ສຳປະທານທີ່ດິນ ຈຳນວນ 27 ພັນກວ່າເຮັກຕາ ເພື່ອເຮັດການຜະລິດກະສິກຳ ໃນນີ້ມີເນື້ອທີ່ດິນປູກກ້ວຍ 8 ພັນກວ່າເຮັກຕາ, ໝາກນັດ 1 ພັນກວ່າເຮັກຕາ, ປູກໄມ້ໃຫ້ໝາກຮ່ວມກັບການລ້ຽງງົວ 11 ພັນກວ່າເຮັກຕາ ລວມມີຝູງງົວ 207.000 ໂຕ, ກຸ່ມບັນດາໂຮງງານຜະລິດປຸງແຕ່ງ 157 ເຮັກຕາ, ປູກໄມ້ຢາງພາລາ, ໄມ້ອຸດສາຫະກຳ 129 ເຮັກຕາ ລວມມູນຄ່າການລົດທຶນ 750 ລ້ານໂດລາສະຫະລັດ ໄລຍະການລົງທຶນແຕ່ປີ 2024-2028, ໄລຍະການດຳເນີນໂຄງການ 50 ປີ ແຕ່ປີ 2024-2074 ສ້າງວຽກເຮັດງານທຳ ແລະ ລາຍຮັບທີ່ໝັ້ນຄົງ ໄດ້ຫຼາຍກວ່າ 25 ພັນຄົນ, ມີສະຫວັດດີການເງິນເດືອນ, ທີ່ພັກ, ໂຮງຮຽນ, ໂຮງໝໍໃຫ້ພ້ອມ, ແລະ ເວລາຕໍ່ມາກໍ່ໄດ້ລົງຢ້ຽມຢາມຄອບຄົວຕົວແບບການປູກພືດຜັກແບບປະສົມປະສານ ເພື່ອສ້າງລາຍຮັບສູ່ຄອບຄົວປີໜຶ່ງໄດ້ຫຼາຍກວ່າ 50-70 ລ້ານກວ່າກີບ, ຢ້ຽມການກຸ່ມການຜະລິດເຂົ້າເປັນສິນຄ້າ, ການຜະລິດພືດຜັກໝາກເຜັດ, ໝາກເຂືອ ແລະ ການລ້ຽງປາດຸກເປັນສິນຄ້າໂດຍນຳໃຊ້ນ້ຳບາດານ ແລະ ແຜງໂຊລາເຊວ ເພື່ອດູດນ້ຳ ສາມາດຫຼຸດຕົ້ນທຶນຄ່າກະແສໄຟຟ້າ, ຫຼຸດຕົ້ນທຶນການຜະລິດເປັນມິດຕໍ່ສິ່ງແວດລ້ອມ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;